

# ທະນາຄານໂລກ ຢູ່ ສປປ ລາວ

WORLD BANK GROUP

# ກຸ່ມທະນາຄານໂລກແມ່ນຫຍັງ ?

ກຸ່ມທະນາຄານໂລກ (World Bank Group (WBG)) ແມ່ນສະຖາບັນການພັດທະນາທີ່ໃຫຍ່ທີ່ສຸດຂອງໂລກ ທີ່ ສະໜອງເງິນກູ້, ທຶນຊ່ວຍເຫຼືອລ້າ, ຄໍາປຶກສາ ແລະ ຄວາມຮູ້ ເພື່ອຊ່ວຍເຫຼືອບັນດາປະເທດໃນການຫລຸດຜ່ອນ ຄວາມທຸກຍາກ ແລະ ສົ່ງເສີມຄວາມອຸດົມຮັ່ງມີຢ່າງທົ່ວເຖິງ.

ທະນາຄານໂລກ (World Bank) ແມ່ນແຫຼ່ງການຊ່ວຍເຫຼືອທາງດ້ານການເງິນ ແລະ ເຕັກນິກທີ່ສໍາຄັນທີ່ສຸດ ສໍາລັບປະເທດກໍາລັງພັດທະນາໃນທົ່ວໂລກ. ມັນບໍ່ແມ່ນທະນາຄານໃນຄວາມໝາຍທົ່ວໄປ, ແຕ່ຫາກແມ່ນຄູ່ຮ່ວມມື ທີ່ມີລັກສະນະສະເພາະເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ສະໜັບສະໜູນການພັດທະນາ.

ກຸ່ມທະນາຄານໂລກ ໄດ້ສ້າງຕັ້ງຂຶ້ນໃນປີ 1944 ແລະ ມີສໍານັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວໍຊິງຕັນ ດີຊີ, ສະຫະລັດອາເມລິກາ. ມັນປະກອບມີສະມາຊິກ ຈໍານວນ 188 ປະເທດ ແລະ ມີຫ້ອງການປະຈໍາຢູ່ 120 ກວ່າປະເທດໃນທົ່ວໂລກ. ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງທະນາຄານໂລກໃນປີ 1961.

ເປົ້າໝາຍຂອງກຸ່ມທະນາຄານໂລກແມ່ນເພື່ອບັນລຸສອງເປົ້າໝາຍ: ຢຸດຕິຄວາມທຸກຍາກທີ່ຮ້າຍແຮງໃຫ້ໄດ້ໃນປີ 2030 ແລະ ຊຸກຍູ້ສົ່ງເສີມຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ຂອງກຸ່ມປະຊາກອນ 40 ສ່ວນຮ້ອຍທີ່ທຸກຍາກທີ່ສຸດ ໃນທຸກໆປະເທດ ທີ່ກໍາລັງພັດທະນາ.

# ກຸ່ມທະນາຄານໂລກປະກອບມີຫ້າອົງການ ຄື:

ທະນາຄານສາກົນເພື່ອການກໍ່ສ້າງ ແລະ ການພັດທະນາ (IBRD) ແລະ ສະມາຄົມພັດທະນາສາກົນ (IDA) ລວມກັນ ປະກອບເປັນທະນາຄານໂລກ (World Bank)

**ທະນາຄານສາກົນ ເພື່ອການກໍ່ສ້າງ ແລະ ການພັດທະນາ** (International Bank for Reconstruction and Development (IBRD)) ທີ່ໃຫ້ທຶນກູ້ຢືມແກ່ລັດຖະບານຂອງບັນດາປະເທດ ທີ່ມີລາຍໄດ້ລະດັບປານກາງ ແລະ ບັນດາປະເທດທີ່ມີລາຍໄດ້ລະດັບຕໍ່າທີ່ສົມຄວນໄດ້ຮັບສິນເຊື່ອ.

**ສະມາຄົມເພື່ອການພັດທະນາສາກົນ** (International Development Association (IDA)) ສະໜອງເງິນກູ້ທີ່ມີເງື່ອນໄຂຜ່ອນຜັນ ແລະ ທຶນຊ່ວຍເຫຼືອລ້າ ໃຫ້ແກ່ລັດຖະບານ ຂອງບັນດາປະເທດທີ່ທຸກຍາກທີ່ສຸດ.

**ອົງການການເງິນສາກົນ** (International Finance Corporation (IFC)) ແມ່ນສະຖາບັນພັດທະນາຂອງໂລກທີ່ໃຫຍ່ທີ່ສຸດ ທີ່ມີເປົ້າໝາຍສະເພາະ ເລັງໃສ່ໃຫ້ການສະໜັບສະໜູນ ແກ່ການພັດທະນາພາກສ່ວນເອກະຊົນຢູ່ບັນດາປະເທດກໍາລັງພັດທະນາ.

**ສະຖາບັນຄໍ້າປະກັນການລົງທຶນແບບຫຼາຍຝ່າຍ** (Multilateral Investment Guarantee Agency (MIGA)) ສົ່ງເສີມການລົງທຶນໂດຍກົງຂອງຕ່າງປະເທດຢູ່ບັນດາປະເທດກໍາລັງພັດທະນາ ເພື່ອສະໜັບສະໜູນການເຕີບໂຕທາງດ້ານເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

**ສູນກາງສາກົນເພື່ອແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ** (International Centre for Settlement of Investment Disputes (ICSID)) ສະໜອງສິ່ງອໍານວຍຄວາມສະດວກໃນລະດັບສາກົນ ສໍາລັບການໄກ່ເກ່ຍ ແລະ ການຕັດສິນ ໂດຍກໍາມະການຂໍ້ຂັດແຍ່ງທີ່ພົວພັນກັບການລົງທຶນ.

WORLD BANK GROUP

ຫ້ອງການທະນາຄານໂລກ ປະຈໍາ ສປປ ລາວ
ປະຕູໄຊ, ຖະໜົນເນຣູ, ຕູ້ໄປສະນີ 345
ນະຄອນຫຼວງວຽງຈັນ, ສປປ ລາວ
Tel: (856-21) 266 200
Fax: (856-21) 266 299
Email: worldbanklaos@worldbank.org
Website: www.worldbank.org/lao
Facebook: www.facebook.com/worldbanklaos



# ສປປ ລາວ: ຄວາມກ້າວໜ້າ ແລະ ສິ່ງທ້າທາຍຂອງປະເທດ

ສປປ ລາວ, ຊຶ່ງແມ່ນປະເທດທີ່ມີລາຍໄດ້ປານກາງລະດັບຕ່ຳ ແລະ ມີລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນເທົ່າກັບ 1.600 ໂດລາສະຫະລັດ ໃນປີ 2014, ເປັນໜຶ່ງໃນບັນດາປະເທດທີ່ມີເສດຖະກິດເຕີບໂຕໄວທີ່ສຸດໃນເຂດ ອາຊີຕາເວັນອອກ ແລະ ປາຊີຟິກ. ໃນໄລຍະທົດສະວັດທີ່ຜ່ານມາ, ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ໂດຍສະເລ່ຍ ໄດ້ບັນລຸເກືອບ 8% ໂດຍມີການນຳໃຊ້ຊັບພະຍາກອນທຳມະຊາດຂອງປະເທດເພີ່ມຂຶ້ນ - ເປັນຕົ້ນແມ່ນ ນ້ຳ, ແຮ່ທາດ ແລະ ປ່າໄມ້ - ທີ່ໄດ້ປະກອບສ່ວນ ໜຶ່ງສ່ວນສາມ ຂອງການເຕີບໂຕຂອງຜົນຜະລິດ. ການກໍ່ສ້າງ ແລະ ການບໍລິການກໍ່ໄດ້ຂະຫຍາຍ ຕົວເນື່ອງຈາກມູນຄ່າຂອງຊັບພະຍາກອນໄດ້ກະຈາຍໄປສູ່ຂະແໜງການອື່ນໆຂອງ ເສດຖະກິດ ແລະ ການເປີດກວ້າງການ ເຊື່ອມໂຍງ ກັບພາກພື້ນ ກໍໄດ້ຊຸກຍູ້ການທ່ອງທ່ຽວ ແລະ ດຶງດູດການລົງທຶນຕ່າງປະເທດຫຼາຍຂຶ້ນ. ການເຕີບໂຕ ໄດ້ປະກອບ ສ່ວນ ໃນການຫລຸດຜ່ອນຈຳນວນປະຊາຊົນທຸກຍາກ ຈາກລະດັບ 33,5% ໃນທົດສະວັດກ່ອນ ລົງສູ່ລະດັບປະມານ 23,2% ຂອງພົນລະເມືອງທັງໝົດ ໃນປີ 2012-2013.

ດ້ວຍບາດກ້າວການພັດທະນາໃນປັດຈຸບັນ ແລະ ການປັບປຸງໝາກຜົນດ້ານການພັດທະນາມະນຸດ ແລະ ເສດຖະກິດ, ຄາດ ວ່າ ສປປ ລາວ ຈະສາມາດບັນລຸເງື່ອນໄຂການຫລຸດພົ້ນຈາກສະຖານະພາບຂອງ “ປະເທດດ້ອຍພັດທະນາ” ໃນປີ 2020.

ຊັບພະຍາກອນທຳມະຊາດ - ປ່າໄມ້, ທີ່ດິນກະສິກຳ, ນ້ຳ ແລະ ແຮ່ທາດ - ກວມເອົາຫຼາຍກວ່າເຄິ່ງໜຶ່ງຂອງ ຄວາມຮັ່ງມີທັງໝົດ ຂອງ ສປປ ລາວ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ເພື່ອບັນລຸການພັດທະນາໃນໄລຍະຍາວ ແລະ ຄວາມຍືນຍົງ ແມ່ນຈຸດສຸມຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ຂອງລັດຖະບານ, ຊຶ່ງຂອບ ການເປັນຄູ່ຮ່ວມມືກັບປະເທດ (2017-2020) ຂອງກຸ່ມທະນາຄານໂລກ ຈະໄດ້ກຳນົດໃຫ້ສອດຄ່ອງກັນ.

ໃນຖານະທີ່ເປັນສະມາຊິກ ຂອງສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ສປປ ລາວ ໄດ້ເພີ່ມທະ ວີການເຊື່ອມໂຍງເຂົ້າກັບເສດຖະກິດພາກພື້ນ ແລະ ສາກົນ. ການສ້າງຕັ້ງປະຊາຄົມເສດຖະກິດອາຊຽນໃນຕົ້ນປີ 2016 ຈະເຮັດໃຫ້ມີການໄຫຼວຽນຂອງສິນຄ້າ ແລະ ການບໍລິການ, ທຶນ ແລະ ແຮງງານທີ່ມີສີມືສູງ ຢ່າງເສລີຫຼາຍຂຶ້ນຢູ່ໃນພາກພື້ນ. ໃນວັນທີ 2 ກຸມພາ 2013, ສປປ ລາວ ໄດ້ເປັນສະມາຊິກຂອງອົງການການຄ້າໂລກ (WTO) ຢ່າງເປັນທາງການ, ຊຶ່ງແມ່ນ ການບັນລຸຜົນສຳເລັດ ຂອງຂະບວນການປະຕິຮູບ ແລະ ການເຈລະຈາທີ່ໄດ້ດຳເນີນມາເປັນເວລາ 15 ປີ.

ສິ່ງທ້າທາຍຕົ້ນຕໍຂອງ ສປປ ລາວ ແມ່ນການເສີມຂະຫຍາຍສາຍພົວພັນ ລະຫວ່າງ ການເຕີບໂຕທາງດ້ານເສດຖະກິດ ແລະ ການຫລຸດຜ່ອນຄວາມທຸກຍາກ ແລະ ການຮັບປະກັນຄວາມຍືນຍົງ ຂອງການເຕີບໂຕທາງດ້ານເສດຖະກິດ. ອັນນີ້ ຮຽກ ຮ້ອງໃຫ້ຕ້ອງມີການເອົາໃຈໃສ່ໃນການສ້າງທຶນມະນຸດ ລວມທັງການແກ້ໄຂບັນຫາການຂາດໂພຊະນາການ ທີ່ຍັງສືບຕໍ່ ມີອັດຕາສ່ວນສູງ (ໃນປີ 2012, ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີຄວາມສູງຕ່ຳກວ່າມາດຕະຖານແມ່ນ 44%) ແລະ ການປັບປຸງໝາກຜົນດ້ານການສຶກສາ (32% ຂອງຈຳນວນນັກຮຽນຊັ້ນ ປໍ 2 ບໍ່ສາມາດອ່ານໜັງສືໄດ້ ໃນປີ 2012). ພ້ອມດຽວກັນນັ້ນ, ການສ້າງກາລະໂອກາດໃຫ້ແກ່ກຳລັງແຮງງານທີ່ມີສີມືດີ ກໍຮຽກຮ້ອງໃຫ້ມີສະພາບແວດລ້ອມ ທາງດ້ານ ທຸລະກິດ ທີ່ມີປະສິດທິພາບ ແລະ ໂປ່ງໃສ ທີ່ຈະເຮັດໃຫ້ ສປປ ລາວ ປັບປຸງຄວາມສະດວກໃນການດຳເນີນທຸລະກິດ ຈາກ ອັນດັບທີ 134 (ໃນຈຳນວນ 189 ປະເທດ) ໃນປັດຈຸບັນ ໃຫ້ດີຂຶ້ນໃນການຈັດອັນດັບການດຳເນີນທຸລະກິດ ປີ 2016 (Doing Business 2016). ນອກຈາກນັ້ນ, ການດຳເນີນນະໂຍບາຍເສດຖະກິດມະຫາພາກແບບລະມັດລະວັງ ແລະ ການຄຸ້ມຄອງ ແລະ ອະນຸລັກ ຊັບພະຍາກອນທຳມະຊາດຢ່າງມີຍຸດທະສາດ ກໍແມ່ນສິ່ງຈຳເປັນເພື່ອຮັບປະກັນໃຫ້ອັດຕາການເຕີບໂຕໃນ ປັດຈຸບັນ ບໍ່ເປັນພາລະທີ່ໜັກໜ່ວງເກີນໄປສຳລັບຮຸ່ນຄົນໃນອານາຄົດ.

  

# ການເປັນຄູ່ຮ່ວມມື ລະຫວ່າງ ສປປ ລາວ ແລະ ກຸ່ມທະນາຄານໂລກ

ໂຄງການທຳອິດຢູ່ ສປປ ລາວ ທີ່ໄດ້ຮັບການສະໜັບສະໜູນຈາກກຸ່ມທະນາຄານໂລກ ໄດ້ເລີ່ມຕົ້ນໃນປີ 1977 ໃນຂະແໜງກະສິກຳ. ຕະຫຼອດໄລຍະຫ້າສິບກວ່າປີຂອງການເປັນຄູ່ຮ່ວມພັດທະນາ, ການສະໜອງທຶນ ແລະ ການຊ່ວຍເຫຼືອຂອງທະນາຄານໂລກ ໄດ້ຊ່ວຍເຫຼືອ ສປປ ລາວ ໃນການພັດທະນາການເຂົ້າເຖິງໄຟຟ້າ, ການສະໜັບສະໜູນແກ່ການເຊື່ອມຕໍ່ເສັ້ນທາງ, ການໂທລະຄົມມະນາຄົມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການພັດທະນາພາກສ່ວນເອກະຊົນ ແລະ ການລິເລີ່ມການພັດທະນາມະນຸດ ເປັນຕົ້ນແມ່ນການສະໜັບສະໜູນການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ. ຍຸດທະສາດການເປັນຄູ່ຮ່ວມມືກັບປະເທດ (CPS) ສຳລັບ ສປປ ລາວ ໃນໄລຍະ 2012-2016 ປະກອບມີ ສາມຈຸດປະສົງຍຸດທະສາດ ແລະ ໜຶ່ງບັນຫາສຳຄັນທີ່ພົວພັນກັບຫຼາຍຂະແໜງການ.

**ຄວາມສາມາດໃນການແຂ່ງຂັນ ແລະ ການເຊື່ອມຕໍ່ກັບພາກພື້ນ:** ເສີມຂະຫຍາຍຂີດຄວາມສາມາດຂອງລັດຖະບານ ເພື່ອສະໜັບສະໜູນຄວາມຫຼາກຫຼາຍຂອງການເຕີບໂຕ ແລະ ຄວາມສາມາດໃນການແຂ່ງຂັນ ແລະ ເພີ່ມຄວາມສາມາດໃນການເຂົ້າເຖິງການບໍລິການພື້ນຖານໂຄງລ່າງດ້ານການຂົນສົ່ງ ແລະ ພະລັງງານທີ່ດີກວ່າເກົ່າ.

**ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ:** ສ້າງຄວາມເຂັ້ມແຂງໃນການບໍລິຫານລັດ ແລະ ການຄຸ້ມຄອງຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່ ລວມທັງການຈັດຕັ້ງປະຕິບັດວຽກງານເຂື່ອນໄຟຟ້ານ້ຳເທີນ 2 ຢ່າງໝັ້ນຄົງ; ການຄຸ້ມຄອງສິ່ງແວດລ້ອມ, ສັງຄົມ ແລະ ຊັບພະຍາກອນນ້ຳແບບຍືນຍົງ; ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ.

**ການພັດທະນາແບບທົ່ວເຖິງ:** ເພີ່ມການນຳໃຊ້ ແລະ ຄຸນນະພາບຂອງການບໍລິການສຸຂະພາບແມ່ ແລະ ເດັກ ທີ່ຈຳເປັນ, ຂະຫຍາຍການເຂົ້າເຖິງ ແລະ ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ຢູ່ບັນດາເມືອງເປົ້າໝາຍ ແລະ ດ້ອຍໂອກາດ, ປັບປຸງການເຂົ້າເຖິງການບໍລິການພື້ນຖານ ແລະ ຕະຫຼາດ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນເຂດຊົນນະບົດ.

**ວຽກງານທີ່ກວມລວມກັບຫຼາຍຂະແໜງການ:** ການຄຸ້ມຄອງຂອງພາກລັດທີ່ເຂັ້ມແຂງ: ເສີມຂະຫຍາຍຂີດຄວາມສາມາດຂອງລັດຖະບານ ໃນການຄຸ້ມຄອງເສດຖະກິດມະຫາພາກ ແລະ ການປະສານງານດ້ານນະໂຍບາຍ, ການຕິດພັນຢ່າງສະໜິດແໜ້ນ ລະຫວ່າງ ການວາງແຜນ, ຍຸດທະສາດດ້ານການເງິນ, ການກູ້ຢືມ ແລະ ການສ້າງແຜນງົບປະມານປະຈຳປີ ລວມທັງການປັບປຸງການຄຸ້ມຄອງດ້ານການເງິນ ເພື່ອຮັບປະກັນການຄຸ້ມຄອງລາຍຮັບຢ່າງເໝາະສົມ.

**ການສຸມໃສ່ຄວາມທຸກຍາກ:** ກຸ່ມທະນາຄານໂລກ (WBG) ກຳລັງກະກຽມການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD) ເພື່ອກຳນົດສິ່ງທ້າທາຍ ແລະ ກາລະໂອກາດຕົ້ນຕໍໃນການພັດທະນາ ເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ຊຸກຍູ້ຄວາມອຸດົມຮັ່ງມີຢ່າງທົ່ວເຖິງຢູ່ ສປປ ລາວ. ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (SCD) ຍັງຈະສະໜອງຂໍ້ມູນໃຫ້ແກ່ການສ້າງຂອບການເປັນຄູ່ຮ່ວມມືກັບປະເທດ (CPF) ໄລຍະ 2017-2020 ຂອງກຸ່ມທະນາຄານໂລກ. ຂອບການເປັນຄູ່ຮ່ວມມືກັບປະເທດດັ່ງກ່າວ ຈະກຳນົດຂົງເຂດ ຊຶ່ງກຸ່ມທະນາຄານໂລກສາມາດມີສ່ວນຮ່ວມໃນ 4 ປີຕໍ່ໜ້າ ເພື່ອໃຫ້ການສະໜັບສະໜູນ ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ຂອງລັດຖະບານ ສປປ ລາວ.



# ການຊ່ວຍເຫຼືອແກ່ປະຊາຊົນຂອງ ສປປ ລາວ: ສະພາບລວມຂອງຜົນໄດ້ຮັບຈາກການສະໜັບສະໜູນຂອງທະນາຄານໂລກ

**ໂຄງການເຂື່ອນໄຟຟ້າ ນ້ຳເທີນ 2:** ໂຄງການເຂື່ອນໄຟຟ້າອະເນກປະສົງ ນ້ຳເທີນ 2 (NT2 Multi-purpose Hydroelectric Project) ຖືກຈັດຕັ້ງປະຕິບັດຮ່ວມກັນ ໂດຍລັດຖະບານ ແຫ່ງ ສປປ ລາວ ແລະ ບໍລິສັດ ໄຟຟ້າ ນ້ຳເທີນ 2. ໂຄງການດັ່ງກ່າວໄດ້ຮັບການສະໜັບສະໜູນ ໂດຍການສະໜອງທຶນຈາກ 27 ພາກສ່ວນ ລວມທັງທະນາຄານໂລກ ແລະ ທະນາຄານພັດທະນາອາຊີ. ຮອດປີ 2035, ຄາດວ່າໂຄງການນີ້ຈະສ້າງລາຍຮັບໃຫ້ແກ່ລັດຖະບານ ປະມານ 2 ຕື້ US$ ສຳລັບການຫລຸດຜ່ອນຄວາມທຸກຍາກ ແລະ ການປົກປັກຮັກສາສິ່ງແວດລ້ອມ ດ້ວຍການຂາຍພະລັງໄຟຟ້າໃຫ້ແກ່ປະເທດໄທ ແລະ ການເຊື່ອມຕໍ່ກັບເຄືອຂ່າຍໄຟຟ້າຂອງລາວ. ລາຍຮັບຈາກການຂາຍໄຟຟ້າໄດ້ຖືກນຳໃຊ້ເພື່ອສະໜອງທຶນ ໃຫ້ແກ່ຄວາມພະຍາຍາມຂອງລັດຖະບານ ເພື່ອຂະຫຍາຍວຽກງານຮັກສາສຸຂະພາບ ແລະ ການສຶກສາໃຫ້ກວ້າງຂວາງ ແລະ ແຜນງານຫລຸດຜ່ອນຄວາມທຸກຍາກ ແລະ ປົກປັກຮັກສາສິ່ງແວດລ້ອມທີ່ມີເງື່ອນໄຂໄດ້ຮັບທຶນ ຢູ່ ສປປ ລາວ.



**ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ:** ການຂະຫຍາຍໂຄງການຈັດສັນປ່າໄມ້ ແລະ ພັດທະນາຊົນນະບົດ (SUFORD SU) (ມູນຄ່າ 31,8 ລ້ານ US$)ໄດ້ສົ່ງເສີມການຄຸ້ມຄອງ-ຈັດສັນປ່າໄມ້ແບບຍືນຍົງ ແລະ ມີສ່ວນຮ່ວມ ແລະ ທົດລອງການຄຸ້ມຄອງທີວວະທັດປ່າໄມ້. ໂຄງການສິ່ງແວດລ້ອມ ແລະ ສັງຄົມຢູ່ລາວໄລຍະ 2 (LENS2) ໄດ້ປັບປຸງການຄຸ້ມຄອງຈັດສັນເຂດປ່າສະຫງວນແຫ່ງຊາດ ແລະ ຫລຸດຜ່ອນການຊື້ຂາຍສັດນ້ຳສັດປ່າຢ່າງຜິດກົດໝາຍ. ໂຄງການດັ່ງກ່າວໄດ້ຮັບການສະໜອງທຶນເພີ່ມ ຈາກສະມາຄົມພັດທະນາສາກົນ (IDA) ຈຳນວນ 15 ລ້ານ US$ ໃນເດືອນເມສາ 2015 ແລະ ຂອບເຂດຂອງໂຄງການໄດ້ຂະຫຍາຍອອກຕື່ມ ເພື່ອກວມເອົາການສ້າງຂີດຄວາມສາມາດ ສຳລັບການປ້ອງກັນເຂດແບ່ງນ້ຳທີ່ມີປ່າໄມ້ ແລະ ສຳລັບການຄຸ້ມຄອງຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ.



**ການສຶກສາ:** ໂຄງການພັດທະນາການສຶກສາໄລຍະສອງໄດ້ຊ່ວຍເພີ່ມອັດຕາການເຂົ້າຮຽນ ແລະ ການຮຽນຈົບຊັ້ນຂອງນັກຮຽນ ແລະ ປັບປຸງຄຸນນະພາບຂອງການສຶກສາຢູ່ 6 ແຂວງທີ່ທຸກຍາກກວ່າໝູ່ຂອງ ສປປ ລາວ. ພາຍໃຕ້ໂຄງການດັ່ງກ່າວ, ໂຮງຮຽນປະຖົມ 781 ແຫ່ງໄດ້ຮັບການກໍ່ສ້າງຂຶ້ນ, ຊຶ່ງແຕ່ລະແຫ່ງແມ່ນໂຮງຮຽນປະຖົມສົມບູນ; ຄູສອນ ປະມານ 4.000 ຄົນໄດ້ຮັບການຝຶກອົບຮົມ, ອຸປະກອນການສອນ-ການຮຽນຈຳນວນຫຼາຍໄດ້ຮັບການພັດທະນາ ແລະ ປຶ້ມແບບຮຽນຈຳນວນ 3 ລ້ານກວ່າເຫຼັ້ມໄດ້ນຳໄປແຈກຢາຍ. ໂຄງການພັດທະນາເດັກກ່ອນໄວຮຽນ (ມູນຄ່າ 28 ລ້ານ US$) ທີ່ດຳເນີນຢູ່ໃນປັດຈຸບັນ ມີເປົ້າໝາຍເລັ່ງໃສ່ຂະຫຍາຍການເຂົ້າເຖິງ ແລະ ປັບປຸງຄຸນນະພາບຂອງການສຶກສາເດັກກ່ອນໄວຮຽນ; ສ່ວນໂຄງການຮ່ວມມືສາກົນເພື່ອການສຶກສາ ໄລຍະສອງ (Second Global Partnership for Education Project) (ມູນຄ່າ 16,8 ລ້ານ US$) ໄດ້ສະໜັບສະໜູນຄວາມພະຍາຍາມໃນການປັບປຸງຄຸນນະພາບຂອງອະນຸບານສຶກສາ ແລະ ປະຖົມສຶກສາ.



**ສາທາລະນະສຸກ:** ທະນາຄານໂລກຍັງໄດ້ໃຫ້ການສະໜັບສະໜູນແກ່ລັດຖະບານ ສປປ ລາວ ໂດຍຜ່ານໂຄງການປັບປຸງການບໍລິການດ້ານສາທາລະນະສຸກ (Health Services Improvement Project). ໂຄງການດັ່ງກ່າວຊ່ວຍລັດຖະບານໃນການເພີ່ມການນຳໃຊ້ ແລະ ຄຸນນະພາບຂອງການບໍລິການດ້ານສຸຂະພາບ ສຳລັບແມ່ຍິງທີ່ທຸກຍາກ ແລະ ເດັກນ້ອຍ, ເປັນຕົ້ນຢູ່ເຂດຊົນນະບົດ. ຜົນໄດ້ຮັບໃນເບື້ອງຕົ້ນສະແດງໃຫ້ເຫັນວ່າ ໃນປັດຈຸບັນ, ປະຊາຊົນທຸກຍາກຈຳນວນ 0,78 ລ້ານຄົນສາມາດເຂົ້າເຖິງການບໍລິການດ້ານສາທາລະນະສຸກຂັ້ນພື້ນຖານ, ໂພຊະນາການ ຫຼື ການບໍລິການດ້ານສຸຂະພາບຈະເລີນພັນ; ເກືອບ 0,9 ລ້ານກໍລະນີຂອງການບໍລິການທຶນດ້ານສຸຂະພາບໄດ້ສະໜອງໃຫ້ແກ່ປະຊາຊົນຜູ້ທຸກຍາກ; ສະຖານທີ່ອຳນວຍຄວາມສະດວກດ້ານສຸຂະພາບຈຳນວນ 424 ແຫ່ງ ໄດ້ຮັບການກໍ່ສ້າງຂຶ້ນ ຫຼື ການບູລະນະຄືນໃໝ່ ແລະ ພະນັກງານສາທາລະນະສຸກຫຼາຍກວ່າ 3.350 ຄົນໄດ້ຮັບການຝຶກອົບຮົມ. ໂຄງການ ພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ໂພຊະນາການ (Health Governance and Nutrition Development Project) ທີ່ດຳເນີນຢູ່ໃນປັດຈຸບັນ (ມູນຄ່າ 26,4 ລ້ານ US$) ສະໜັບສະໜູນການຂະຫຍາຍການບໍລິການດ້ານສຸຂະພາບຈະເລີນພັນ ແລະ ສຸຂະພາບແມ່ ແລະ ເດັກ ໃຫ້ກວ້າງຂວາງ ລວມທັງຂະບວນການປ່ຽນແປງການປະພຶດທາງດ້ານໂພຊະນາການ ໃນລະດັບຊາດ.



**ການຍຸດຕິຄວາມທຸກຍາກ:** ກອງທຶນຫລຸດຜ່ອນຄວາມທຸກຍາກ (PRF) ແມ່ນໂຄງການພັດທະນາຊຸມຊົນແບບມີສ່ວນຮ່ວມຂອງຫຼາຍພາກສ່ວນ ທີ່ໃຫຍ່ທີ່ສຸດໃນປະເທດ. ໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະສອງ ທີ່ດຳເນີນຢູ່ໃນປັດຈຸບັນ (PRF II project), ຊຶ່ງມີທຶນທັງໝົດປະມານ 63 ລ້ານ US$ ຈາກບັນດາຄູ່ຮ່ວມພັດທະນາ, ໃນນັ້ນ 25 ລ້ານ US$ ແມ່ນທຶນຈາກສະມາຄົມພັດທະນາສາກົນ (IDA) ແລະ 10 ລ້ານ US$ ແມ່ນທຶນຂອງລັດຖະບານ ແຫ່ງ ສປປ ລາວ, ໄດ້ສ້າງຜົນປະໂຫຍດ ໃຫ້ແກ່ປະຊາຊົນທຸກຍາກໃນເຂດຊົນນະບົດ ຫຼາຍກວ່າ 450.000 ຄົນ ໃນປະມານ 850 ບ້ານ. ໃນບັນດາບ້ານເປົ້າໝາຍ, ໝາກຜົນທີ່ໄດ້ຮັບມີຄື: ການນຳໃຊ້ການບໍລິການດ້ານສາທາລະນະສຸກເພີ່ມຂຶ້ນ 37%, ການເຂົ້າເຖິງນ້ຳສະອາດເພີ່ມຂຶ້ນ 76% ແລະ ການເຂົ້າຫາເສັ້ນທາງທີ່ໃຊ້ໄດ້ໃນທຸກລະດູການເພີ່ມຂຶ້ນ 30%. ການສະໜອງທຶນເພີ່ມເຕີມໃຫ້ແກ່ກອງທຶນຫລຸດຜ່ອນຄວາມທຸກຍາກໄດ້ຮັບການອະນຸມັດໃນເດືອນມິຖຸນາ 2015 ເພື່ອໃຫ້ສາມາດດຳເນີນການກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນ, ເຊັ່ນ: ໂຮງຮຽນ, ສຸກສາລາ, ເສັ້ນທາງ ແລະ ລະບົບນ້ຳສະອາດ ສຳລັບຊຸມຊົນທີ່ທຸກຍາກໃນທົ່ວປະເທດລາວ.




**ການຄ້າ:** ໂຄງການອຳນວຍຄວາມສະດວກດ້ານ ພາສີ ແລະ ການຄ້າ (Customs and Trade Facilitation Project) ໄດ້ຊ່ວຍເຮັດໃຫ້ການແຈ້ງພາສີຢູ່ດ່ານພາສີຊາຍແດນ ມີຄວາມວ່ອງໄວ ແລະ ມີປະສິດທິພາບດີຂຶ້ນ. ລະບົບແຈ້ງພາສີດ້ວຍຄອມພິວເຕີ, ຊຶ່ງໃນປັດຈຸບັນ ໄດ້ນຳໃຊ້ຢູ່ 21 ດ່ານພາສີທາງການ, ໄດ້ຮັບເອົາການຊຳລະພາສີແບບອີເລັກໂຕຣນິກ ແລະ ສະໜອງຂໍ້ມູນຂ່າວສານດັ່ງກ່າວ ໃນເວລາຕົວຈິງ ໃຫ້ແກ່ລະບົບການຄຸ້ມຄອງການເງິນຂອງລັດຖະບານ. ໂຄງການພັດທະນາການຄ້າ ໄລຍະສອງ (TDF-2) ໄດ້ຊ່ວຍ ສປປ ລາວ ໃນການຈັດຕັ້ງປະຕິບັດບັນດາແຜນບູລິມະສິດດ້ານການຄ້າ ແລະ ການແຂ່ງຂັນ ພາຍຫຼັງທີ່ປະເທດໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ຢ່າງເປັນທາງການໃນເດືອນກຸມພາ2013. ໂຄງການດັ່ງກ່າວຖືກສ້າງຂຶ້ນຈາກຜົນສຳເລັດຂອງໂຄງການ TDF-1 ທີ່ໄດ້ສ້າງຕັ້ງສູນຂໍ້ມູນຂ່າວສານດ້ານການຄ້າທາງອີເລັກໂຕຼນິກ (Electronic Trade Portal) ຂຶ້ນເປັນເທື່ອທຳອິດໃນປະເທດ ທີ່ສະໜອງທຸກຂໍ້ມູນຂ່າວສານທີ່ພົວພັນກັບການຄ້າໃຫ້ແກ່ມວນຊົນໂດຍທົ່ວໄປ. ພາຍໃຕ້ໂຄງການ TDF-2, ບັນດາມາດຕະການທີ່ບໍ່ແມ່ນພາສີ ທີ່ມີຜົນກະທົບຕໍ່ການຄ້າ ໄດ້ຖືກຈັດເປັນບັນຊີ ແລະ ຈັດພິມເຜີຍແຜ່ທາງອອນລາຍ ແລະ ການປະເມີນຜົນກະທົບຂອງລະບຽບ ຕໍ່ການຄ້າດ້ານການບໍລິການ ແລະ ການລົງທຶນລວມທັງລະບຽບການສະເພາະຂອງ ຂະແໜງການ ໂທລະຄົມມະນາຄົມ, ການປະກັນໄພ ແລະ ການບໍລິການດ້ານວິຊາຊີບ ກໍໄດ້ຮັບການປະຕິບັດສຳເລັດ.





**ອົງການການເງິນສາກົນ (IFC)** ສະໜັບສະໜູນການພັດທະນາເສດຖະກິດແບບຍືນຍົງຢູ່ ສປປ ລາວ ດ້ວຍການລົງທຶນໃນວິສາຫະກິດການຄ້າ ແລະ ການໃຫ້ຄຳປຶກສາ ແກ່ລັດຖະບານ ແລະ ບໍລິສັດຕ່າງໆ ແນໃສ່ເຮັດໃຫ້ບັນດາໂຄງການຂອງພາກສ່ວນເອກະຊົນ ໄດ້ນຳຜົນຕອບແທນມາສູ່ບັນດາຜູ້ລົງທຶນ, ສ້າງລາຍໄດ້ແກ່ຜູ້ທຸກຍາກ ແລະ ກຳນົດມາດຕະຖານທີ່ດີສຳລັບວິທີການປະຕິບັດທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ອົງການການເງິນສາກົນ ໄດ້ເຄື່ອນໄຫວຢູ່ ສປປລ ໃນຫຼາຍຂົງເຂດ:



**ສົ່ງເສີມການເຂົ້າເຖິງແຫຼ່ງທຶນຢ່າງສະເໝີພາບ:** ອົງການການເງິນສາກົນ (IFC) ເຮັດວຽກຮ່ວມກັບທະນາຄານ ແລະ ສະຖາບັນການເງິນອື່ນໆ ລວມທັງບັນດາອົງການທີ່ກ່ຽວຂ້ອງຂອງລັດຖະບານເພື່ອປັບປຸງການເຂົ້າເຖິງແຫຼ່ງທຶນ ແກ່ບັນດາທຸລະກິດ. ນອກຈາກນັ້ນ, ອົງການການເງິນສາກົນຍັງຊຸກຍູ້ການສະໜອງເງິນກູ້ໃຫ້ແກ່ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ, ຊຶ່ງກວມຫຼາຍກວ່າ 90% ຂອງຈຳນວນວິສາຫະກິດທັງໝົດໃນພາກສ່ວນເອກະຊົນຂອງ ສປປ ລາວ, ໂດຍຊ່ວຍສ້າງຕັ້ງລະບົບຈົດທະບຽນຊັບສິນເຄື່ອນທີ່ຄ້ຳປະກັນທາງອອນໄລ. ການຈົດທະບຽນດັ່ງກ່າວ ໄດ້ອຳນວຍຄວາມສະດວກໃຫ້ແກ່ຜູ້ກູ້ຢືມໃນການໄດ້ຮັບເງິນກູ້ ໂດຍໃຊ້ເຄື່ອງມືອຸປະກອນ ແລະ ສິນຄ້າໃນສາງ ເປັນຊັບສິນຄ້ຳປະກັນ ແທນທີ່ຈະເອົາໃບຕາດິນ ຫຼື ອາຄານເປັນສິ່ງຄ້ຳປະກັນ.

**ສົ່ງເສີມການພັດທະນາເຂື່ອນໄຟຟ້າແບບຍືນຍົງ ແລະ ພື້ນຖານໂຄງລ່າງອື່ນໆ:** (i) ອົງການການເງິນສາກົນ(IFC) ປຸກລະດົມພາກສ່ວນເອກະຊົນໃຫ້ມີສ່ວນຮ່ວມໃນແຜນງານການຜະລິດແລະແຈກຢາຍໄຟຟ້າຢູ່ສປປລາວເພື່ອພັດທະນາເຂື່ອນໄຟຟ້າໃຫ້ມີຄວາມຍືນຍົງຫຼາຍຂຶ້ນ, (ii) ອົງການການເງິນສາກົນໄດ້ສະໜອງທຶນເງິນກູ້ ຈຳນວນ 15 ລ້ານUS$ ໃຫ້ແກ່ລັດວິສາຫະກິດໄຟຟ້າລາວ (EDL) ແລະ ໄດ້ໃຫ້ຄຳປຶກສາ ແກ່ ບໍລິສັດຜະລິດ-ໄຟຟ້າລາວມະຫາຊົນ ກ່ຽວກັບການປັບປຸງການຄຸ້ມຄອງຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງບໍລິສັດ, (iii) ອົງການການເງິນສາກົນຊ່ວຍບັນດາທະນາຄານ ໃນການຄຸ້ມຄອງຄວາມສ່ຽງດ້ານການລົງທຶນໃນໂຄງການເຂື່ອນໄຟຟ້າໃຫ້ດີກວ່າເກົ່າ ແລະ ໃຫ້ຄຳປຶກສາແກ່ບັນດາບໍລິສັດໄຟຟ້າ ກ່ຽວກັບວິທີການເພື່ອປັບປຸງການດຳເນີນທຸລະກິດ ແລະ ມາດຕະຖານທຸລະກິດຂອງພວກເຂົາ, ແລະ (iv) ອົງການການເງິນສາກົນສົ່ງເສີມການຮ່ວມມື ລະຫວ່າງພາກລັດ-ພາກເອກະຊົນ (public-private partnerships) ເພື່ອຊຸກຍູ້ໃຫ້ບັນດາບໍລິສັດເອກະຊົນ ລົງທຶນ ແລະ ເຮັດວຽກຮ່ວມກັບລັດຖະບານເພື່ອກໍ່ສ້າງພື້ນຖານໂຄງລ່າງທີ່ມີຄຸນນະພາບສູງ.





**ປັບປຸງບັນຍາກາດການລົງທຶນ:** ອົງການການເງິນສາກົນ (IFC) ໃຫ້ການສະໜັບສະໜູນແກ່ລັດຖະບານລາວ ໃນການພັດທະນາກົດໝາຍ ແລະ ລະບຽບການທີ່ເປັນມິດກັບທຸລະກິດ ທີ່ພົວພັນກັບການເລີ່ມຕົ້ນທຸລະກິດ, ການລົງທຶນ ແລະ ເຂື່ອນໄຟຟ້າທີ່ຍືນຍົງ. ອົງການການເງິນສາກົນໃຫ້ຄຳແນະນຳແກ່ລັດຖະບານ ກ່ຽວກັບການປັບປຸງຂັ້ນຕອນການຍື່ນເອກະສານເພື່ອເສຍອາກອນໃຫ້ກະທັດຮັດເພື່ອຫລຸດຜ່ອນຄ່າສິ້ນເປືອງໃນການປະຕິບັດລະບຽບຂັ້ນຕອນສຳລັບບັນດາທຸລະກິດ ແລະ ປັບປຸງການຄຸ້ມຄອງອາກອນ ແລະ ການເກັບລາຍຮັບໃຫ້ດີຂຶ້ນ. ອົງການການເງິນສາກົນໄດ້ຈັດໃຫ້ພາກລັດ ແລະ ພາກເອກະຊົນໄດ້ພົບປະກັນ ເພື່ອປຶກສາຫາລື ກ່ຽວກັບນະໂຍບາຍທີ່ມີຜົນກະທົບຕໍ່ທຸລະກິດ ໂດຍຜ່ານກອງປະຊຸມທຸລະກິດລາວ (Lao Business Forum).

**ການບໍລິການດ້ານການລົງທຶນ:** ອົງການການເງິນສາກົນ (IFC) ມີຜະລິດຕະພັນ ແລະ ການບໍລິການດ້ານການເງິນທີ່ຫຼາກຫຼາຍ ເພື່ອສາມາດຕອບສະໜອງຕາມຄວາມຕ້ອງການຕົວຈິງຂອງລູກຄ້າ. ບາງຕົວຢ່າງຂອງຜະລິດຕະພັນ ແລະ ການບໍລິການດັ່ງກ່າວ ໄດ້ແກ່ ການໃຫ້ເງິນກູ້ທົ່ວໄປ, ເງິນກູ້ຮ່ວມ, ການລົງທຶນໃນຮຸ້ນ, ຜະລິດຕະພັນຄຸ້ມຄອງຄວາມສ່ຽງ ແລະ ການສະໜອງທຶນເພື່ອການຄ້າສາກົນ ເປັນຕົ້ນ.